ສາທາລະນະລັດ ປະຊາທິປະໄຊ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
ກະຊວງ ໂຍທາທິການ ແລະ ຂົນສົ່ງ
ພະແນກ ຍທຂ ນະຄອນຫຼວງວຽງຈັນ

2283 -
ເລກທີ...../ຍທຂ.ນວ
ນະຄອນຫຼວງວຽງຈັນ,ວັນທີ 07 JUL 2016

ແຈ້ງການ

ຮຽນ: ທ່ານເຈົ້າເມືອງ ເຂດທີ່ມີການຂຸດຄົ້ນຫີນແຮ່-ຊາຍ,ດິນດຳ ໃນນະຄອນຫຼວງວຽງຈັນ.
- ທ່ານຜູ້ປະກອບການຂຸດຄົ້ນຫີນແຮ່-ຊາຍ,ດິນດຳ ໃນນະຄອນຫຼວງວຽງຈັນ.

ເລື່ອງ: ໃຫ້ຢຸດຕິການຂຸດຄົ້ນຫີນແຮ່-ຊາຍ ແລະ ດິນດຳໃນສົກປີ 2015 – 2016.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກ ຍທຂ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ, ສະບັບເລກທີ 9555/ຍທຂ, ລົງວັນທີ 16/07/2009.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການກ່ຽວກັບ ຂຸດຄົ້ນຫີນແຮ່-ຊາຍ ແລະ ດິນດຳຕາມລຳແມ່ນ້ຳຂອງ ແລະ ແມ່ນ້ຳຕ່າງໆ ຢູ່ ສປປ ລາວ ສະບັບເລກທີ 7737/ຍທຂ, ລົງວັນທີ 08/06/2010.

ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໃນນາມຜູ້ຄຸ້ມຄອງ ການຂຸດຄົ້ນຫີນ ແຮ່-ຊາຍ,ດິນດຳ ໃນນະຄອນຫຼວງວຽງຈັນ, ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ປະຕິບັດ ຕາມລຸ່ມນີ້:

1. ໃຫ້ບັນດາຜູ້ປະກອບການທີ່ໄດ້ຮັບອະນຸຍາດຂຸດຄົ້ນຫີນແຮ່-ຊາຍ,ດິນດຳ ໃນສົກປີ 2015 – 2016 ໃນ ທົ່ວນະຄອນຫຼວງວຽງຈັນ ຈົ່ງໄດ້ຢຸດຕິການຂຸດຄົ້ນຢ່າງຂາດຕົວນັບແຕ່ວັນທີ 30 ມິຖຸນາ ຫາວັນທີ 31 ຕຸລາ ປີ 2016
   - ໃຫ້ທຳການຟື້ນຜູເຂດພື້ນທີ່ ທີ່ໄດ້ທຳການຂຸດຄົ້ນຫີນແຮ່-ຊາຍ,ດິນດຳໃຫ້ຄືນສູ່ສະພາບເດີມຕາມທຳມະຊາດ ກ່ອນການຂຸດຄົ້ນ.
   - ໃຫ້ສະຫຼຸບລາຍງານຜົນການດຳເນີນກິດຈະການຂອງຕົນໃຫ້ອົງການລັດທີ່ກ່ຽວຂອ້ງຮັບຊາບຕາມລະບຽບ ການ.
   - ຜູ້ທີ່ມີຈຸດປະສົງຢາກສືບຕໍ່ຂຸດຄົ້ນໃນສົກປີ 2016–2017 ໃຫ້ກະກຽມເອກະສານຄຳຮ້ອງເພື່ອແຈ້ງເຈດ ຈຳນົງຂໍສືບຕໍ່ຂຸດຄົ້ນ ຫາ ພະແນກ ຍທຂ.ນວ ໃຫ້ສຳເລັດພາຍໃນວັນທີ 31ຕຸລາ2016.
2. ກໍລະນີຜູ້ປະກອບການມີຄວາມຈຳເປັນຮີບດ່ວນຕາມການມອບໝາຍຈາກລັດຖະບານຕ້ອງເຮັດໜັງສືສະເໜີ

ສະເພາະການ ພ້ອມທັງຂັດຕິດສັນຍາ ຫຼື ໃບມອບສິດຈາກລັດຖະບານສົ່ງ ຫາ ພະແນກ ຍທຂ.ນວ ໂດຍ ຜ່ານຄະນະກຳມະການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງເພື່ອພິຈາລະນາຕາມທາງຄວນ.

3. ມອບໃຫ້ຂະແໜງຄຸ້ມຄອງທາງນ້ຳ,ຫ້ອງວ່າການເມືອງ,ຫ້ອງການ ຍທຂ ເມືອງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຈົ່ງໄດ້ຜັນຂະຫຍາຍຕິດຕາມກວດກາຢ່າງເຂັ້ມງວດ.
4. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ

ດັ່ງນັ້ນ,ຈົ່ງແຈ້ງການມາຍັງທ່ານເພື່ອຮັບຊາບ ແລະ ປະຕິບັດຕາມລະບຽບການຢ່າງເຂັ້ມງວດ.

ຫົວໜ້າ ພະແນກໂຍທາທິການ ແລະ ຂົນສົ່ງ

ນະຄອນຫຼວງວຽງຈັນ.

ນະຄອນຫຼວງວຽງຈັນ
ພະແນກ
ໂຍທາທິການ
ແລະຂົນສົ່ງ

ຄວດສົ່ງຄາມ ທຳນະລົງ